ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍການຄຸ້ມຄອງທະນະບັດ ແລະ ດຳລັດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂ ວິກິດການຂອງລະບົບການເງິນ



ໃນວັນທີ 28 ເມສາ 2026 ທີ່ສະໂມສອນສະຖາບັນການທະນາຄານ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍການຄຸ້ມຄອງທະນະບັດ ແລະ ດຳລັດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂ ວິກິດຂອງລະບົບການເງິນ ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ, ມີບັນດາຜູ້ຕາງໜ້າຈາກ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການຈັດຕັ້ງສັງຄົມ, ຕາງໜ້າຈາກ ບັນດາກົມພາຍໃນ ທຫລ, ພາກສ່ວນທຸລະກິດ ແລະ ຄະນະຮັບຜິດຊອບກ່ຽວຂ້ອງ ເຂົ້າຮ່ວມ ຫຼາຍກວ່າ 100 ທ່ານ.

ກອງປະຊຸມເຜີຍແຜ່ດຳລັດ ທັງ 02 ສະບັບ ໃນຄັ້ງນີ້, ເພື່ອເປັນການໂຄສະນາເຜີຍແຜ່ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງ ທຫລ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຮູ້ ແລະ ເຂົ້າໃຈເປັນເອກະພາບ, ແນໃສ່ຍົກສູງປະສິດທິຜົນການຈັດຕັ້ງປະຕິບັດຕົວຈິງຂອງນິຕິກຳທັງ 02 ສະບັບ ທີ່ກຳນົດເອົາວຽກງານສຳຄັນຂອງ ທຫລ, ໃນນັ້ນ ວຽກງານການຄຸ້ມຄອງທະນະບັດ ຖືເປັນວຽກງານໜຶ່ງ ຊຶ່ງກຳເນີດຄຽງຄູ່ກັບການສ້າງຕັ້ງ ທຫລ ນັບແຕ່ປີ 1968, ເວລານັ້ນ ທຫລ ໄດ້ປະຕິບັດໜ້າທີ່ຕົ້ນຕໍໃນການພິມ ແລະ ພິມຈຳໜ່າຍເງິນກີບປົດປ່ອຍ ຊຶ່ງເງິນກີບດັ່ງກ່າວ ຈໍລະຈອນຄຽງຄູ່ກັບເງິນຣາຊະອານາຈັກລາວ; ມາຮອດໄລຍະໜຶ່ງ ທຫລ ໄດ້ປະຕິຮູບເງິນກີບປົດປ່ອຍ ເປັນເງິນກີບທະນາຄານທີ່ນຳໃຊ້ໃນປັດຈຸບັນ. ນັບແຕ່ນັ້ນມາ ທຫລ ໄດ້ກຳນົດຮູບແບບ, ສ່ວນປະກອບ ແລະ ປະເພດໃບຕ່າງໆ ເພື່ອສະເໜີລັດຖະບານ ພິຈາລະນາອະນຸມັດ ແລ້ວດຳເນີນການຈັດພິມ ແລະ ພິມຈຳໜ່າຍ ໃນແຕ່ລະໄລຍະ. ມາເຖິງປັດຈຸບັນທະນະບັດ ຢູ່ໃນຂອດຈໍລະຈອນ ມີທັງໝົດ 14 ປະເພດ ນັບແຕ່ ໃບ 1 ກີບ ຮອດ ໃບ 100,000 ກີບ; ແຕ່ອີງຕາມ

ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ບວກໃສ່ອັດຕາເງິນເຟີ້, ສັງຄົມຈຶ່ງນິຍົມນຳໃຊ້ແຕ່ໃບ 500 ກີບ ຈົນຮອດໃບ 100,000 ກີບ. ສ່ວນໃບນ້ອຍ ໄດ້ກາຍເປັນທີ່ລະນຶກ ຍ້ອນມູນຄ່າຕໍ່າ, ແຕ່ກໍຍັງບໍ່ທັນຖືກຖອນອອກຈາກຂອດຈໍລະຈອນ. ດ້ານນິຕິກຳ, ວຽກງານດັ່ງກ່າວ ໄດ້ຖືກກຳນົດໄວ້ໃນກົດໝາຍວ່າດ້ວຍ ທຫລ ສະບັບທຳອິດໃນປີ 1990 ຈົນຮອດສະບັບປັດຈຸບັນ ປີ 2024 (ປັບປຸງມາແລ້ວ 04 ຄັ້ງ: 1995, 1999, 2018 ແລະ 2024) ແລະນິຕິກຳຂັ້ນຜູ້ວ່າການຈຳນວນໜຶ່ງ ເພື່ອເປັນເຄື່ອງມື ແລະ ບ່ອນອີງໃນການຈັດຕັ້ງປະຕິບັດ ແຕ່ຍັງບໍ່ມີນິຕິກຳຂັ້ນດຳລັດ ແລະ ບາງໜ້າວຽກຍັງບໍ່ໄດ້ຜັນຂະຫຍາຍເປັນລະບຽບການສະເພາະ ຊຶ່ງສ້າງຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ເປັນຕົ້ນ ສະຕິສັງຄົມຕໍ່ບົດບາດຂອງເງິນກີບ, ຄວາມເປັນເຈົ້າການຂອງພາກສ່ວນທີ່ກ່ຽວຂ້ອງຕໍ່ວຽກງານຄຸ້ມຄອງທະນະບັດ, ຄວາມເປັນເຈົ້າການໃຫ້ການຮ່ວມມືແຈ້ງຂໍ້ມູນຜູ້ກະທຳຜິດໃນການປອມແປງ ແລະ ນຳໃຊ້ທະນະບັດປອມ. ເມື່ອເຫັນໄດ້ຄວາມຈຳເປັນຄືດັ່ງກ່າວ ທຫລ ຈຶ່ງໄດ້ເລີ່ມຄົ້ນຄວ້າສ້າງດຳລັດດັ່ງກ່າວ ແຕ່ທ້າຍປີ 2023 ແລະ ສຳເລັດໃນທ້າຍປີ 2025.



ສຳລັບວຽກງານການສະກັດກັ້ນ ແລະ ແກ້ໄຂ ວິກິດການຂອງລະບົບການເງິນ ເປັນວຽກງານທີ່ຕິດພັນກັບການສ້າງລະບົບຕາໜ່າງຄວາມປອດໄພທາງດ້ານການເງິນ ຊຶ່ງວຽກງານນີ້ ບັນດາປະເທດ ໃນພາກພື້ນ ໄດ້ໃຫ້ຄວາມສຳຄັນຫຼາຍ ສະແດງອອກໃນອົງປະກອບຕາໜ່າງຄວາມປອດໄພທາງດ້ານການເງິນ ທີ່ມາຈາກພາກສ່ວນສຳຄັນໃນຂະແໜງເສດຖະກິດ ເປັນຕົ້ນ ທະນາຄານກາງ ຫຼື ອົງການຄຸ້ມຄອງສະຖາບັນການເງິນ, ອົງການປົກປ້ອງເງິນຝາກ, ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. ພ້ອມນີ້, ຫຼາຍປະເທດ ໄດ້ສ້າງຕັ້ງຄະນະກຳມະການສະຖຽນລະພາບຂອງລະບົບການເງິນ ທີ່ປະກອບດ້ວຍການນຳສູງສຸດຂອງແຕ່ລະພາກສ່ວນ ແລະ ກຳນົດຂອບການຈັດຕັ້ງປະຕິບັດທີ່ເປັນອັນລວມ. ສຳລັບບົດຮຽນໃນການຈັດຕັ້ງປະຕິບັດຜ່ານມາຂອງ ສປປ ລາວ ເຖິງວ່າລະບົບຕາໜ່າງຄວາມປອດໄພທາງດ້ານການເງິນ ຈະມີອົງປະກອບຄົບຖ້ວນ ຄືກັບປະເທດອື່ນ, ແຕ່ຂະແໜງການເຫຼົ່ານັ້ນຍັງເຮັດບົດບາດພໍໃຜພໍລາວ, ຂາດການປະສານສົມທົບ, ປຶກສາຫາລື ແລະ ແລກປ່ຽນຂໍ້ມູນຂ່າວສານກັນຢ່າງກົມກຽວ ແລະສະໝໍ່າສະເໝີ, ມີການຕິດຕາມ ກວດກາ ແລະ ແກ້ໄຂບັນຫາ ຕາມນິຕິກຳຂອງຂະແໜງການໃຜລາວ, ບໍ່ທັນມີນິຕິກຳທີ່ເປັນອັນລວມທີ່ຮອງຮັບໃຫ້ການແກ້ໄຂບັນຫາລະດັບຊາດຮ່ວມກັນ. ເມື່ອເຫັນໄດ້ຂໍ້ຫຍຸ້ງຍາກຄືດັ່ງກ່າວ,

ທຫລ ຈຶ່ງໄດ້ເລີ່ມຄົ້ນຄວ້າສ້າງດຳລັດວ່າດ້ວຍການສະກັດກັ້ນ ແລະ ການແກ້ໄຂ ວິກິດການຂອງລະບົບການເງິນ ແຕ່ທ້າຍປີ 2024 ແລະ ສຳເລັດໃນຕົ້ນປີ 2026.



ກອງປະຊຸມເຜີຍແຜ່ດັ່ງກ່າວ ໄດ້ດຳເນີນໄປເປັນເວລາ 01 ວັນເຕັມ, ດ້ວຍບັນຍາກາດອັນຟົດຟື້ນ, ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ, ມີການປຶກສາຫາລື ແລກປ່ຽນຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນປະເດັນຕ່າງໆ ເຮັດໃຫ້ກອງປະຊຸມບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ຂ່າວ-ພາບ: ຫ້ອງການ ທຫລ